**ບົດປະເມີນຜົນກະທົບ**
**ຂອງຮ່າງດຳລັດ ການຂ້າສັດ ແລະ ການກວດກາອະນາໄມຊີ້ນ**

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳໜົດເວລາ ໃນການສ້າງ ຫຼື ປັບປຸງນິຕິກຳ

### 1.1 ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ/ອົງການ: ກະຊວງ ກະສິກຳ ແລະ ປ່າໄມ້
ຊື່ກົມ/ພະແນກ: ກົມລ້ຽງສັດ ແລະ ການປະມົງ
ຊື່ ແລະ ຕຳແໜ່ງຂອງພະນັກງານທີ່ຮັບຜິດຊອບ: ທ່ານ ດວງຈັນ ສິຣິວົງສາ ຫົວໜ້າພະແນກ ລະບຽບການ
ເບີໂທລະສັບ: 020 22866068, ເບີໂທຫ້ອງການ :021-215141, 021-215242
ອີເມລ :ds.sps21@gmail.com, sithongp@yahoo.com

### 1.2 ຊື່ນິຕິກຳ

ຊື່ຮ່າງນິຕິກຳ: ຮ່າງດຳລັດ ການຂ້າສັດ ແລະ ການກວດກາອະນາໄມຊີ້ນ
ຮ່າງນິຕິກຳແມ່ນສະບັບ: ☑ ສ້າງໃໝ່ ☐ ປັບປຸງ

### 1.3 ກຳນົດເວລາ:

ກຳນົດເວລາໃນການສ້າງ ຫຼື ປັບປຸງ ໃຫ້ສຳເລັດ (ເວລາເລີ່ມ8 ກໍລະກົດ 2016 ຈົນເຖິງສຳເລັດ20ພະຈິກ 2018)

- ສຳເລັດການແຕ່ງຕັ້ງຄະນະຮັບຜິດຊອບສ້າງ ຮ່າງດຳລັດ ວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມ ຜະລິດຕະພັນສັດ ສະບັບເລກທີ 2704/ກປ, ລົງວັນທີ 18 ພຶດສະພາ 2017;
- ສຳເລັດການສ້າງຮ່າງດຳລັດ ວັນທີ 14 ພະຈິກ 2018;
- ສຳເລັດການທາບທາມຄຳເຫັນຂັ້ນສູນກາງແລະທ້ອງຖິ່ນ ວັນທີ 29 ສິງຫາ 2018;
- ສຳເລັດການປັບປຸງຕາມຄຳເຫັນທາບທາມ ວັນທີ25 ພະຈິກ 2018;
- ສະເໜີຜ່ານຄະນະນຳກະຊວງກະສິກຳແລະປ່າໄມ້ທັນວາ 2018;
- ສະເໜີຜ່ານກະຊວງຍຸຕິທຳເພື່ອກວດກາຄວາມສອດຄ່ອງເດືອນ 03 ປີ 2019;
- ສະເໜີເຂົ້າພິຈາລະນາໃນກອງປະຊຸມລັດຖະບານເດືອນ 06 ປີ 2019.

## 2. ບັນຫາ ແລະ ຈຸດປະສົງ:

### 2.1 ບັນຫາ:

ຊີ້ນສັດ ເປັນຕົ້ນແມ່ນຊີ້ນ ສັດປີກ, ໝູ, ງົວ ແລະ ຄວາຍ ແມ່ນປັດໃຈພື້ນຖານໜຶ່ງຂອງໂຄງປະກອບອາຫານຂອງປະຊາຊົນບັນດາເຜົ່າຂອງ ສປປ ລາວ ມັນມີຄວາມສຳຄັນ ໃນການສະໜອງທາດຊີ້ນແລະສິ່ງເສີມສຸຂະພາບຂອງພວກເຮົາໃຫ້ມີການຈະເລີນເຕີບໂຕ ແລະ ແຂງແຮງ. ນອກນັ້ນ ມັນຍັງແມ່ນສິນຄ້າແລກປ່ຽນຊື້ຂາຍ ແລະ ເປັນລາຍຮັບຂອງປະຊາຊົນ, ນາຍຮ້ອຍ ພໍ່ຄ້າຊາວຂາຍ ນັບທັງຜູ້ປະກອບການຮ້ານອາຫານໂຮງແຮມຕ່າງໆອີກດ້ວຍ.

ຢ່າງໃດກໍຕາມ ເຖິງວ່າຊີ້ນສັດແມ່ນປັດໃຈຈຳເປັນທີ່ຂາດບໍ່ໄດ້ ແຕ່ມັນກໍກໍ່ໃຫ້ເກີດບັນຫາຕໍ່ສຸຂະພາບຂອງຜູ້ບໍລິໂພກ ຖ້າຊີ້ນນັ້ນ ບໍ່ປອດໄພ ຫຼື ບໍ່ມີຄຸນນະພາບທີ່ເໝາະສົມກັບການບໍລິໂພກ. ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ ຂະແໜງການກະສິກຳ ແລະ ປ່າໄມ້ ໃນຖານະເປັນຜູ້ຮັບຜິດຊອບ ພັດທະນາ ແລະ ຄຸ້ມຄອງການລ້ຽງສັດ ກໍຄືການຮັບປະກັນຄວາມປອດໄພຂອງຊີ້ນສັດ ທີ່ບໍລິໂພກຢູ່ ສປປ ລາວ ນັ້ນ ພວກເຮົາກໍມີການອອກນິຕິກຳ ຄຸ້ມຄອງຈຳນວນໜຶ່ງ ເປັນຕົ້ນແມ່ນ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ ໃນປີ 2008 ແລະ ໄດ້ປັບປຸງ ໃຫ້ສົມບູນກວ່າເກົ່າ ໃນປີ 2016.ໃນລະດັບກະຊວງກໍໄດ້ອອກຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ ເລກທີ0870/ກປ ລົງວັນທີ 18 ມີນາ 2011.ໃນລະດັບກົມ ກໍໄດ້ອອກຂໍ້ຕົກລົງຂອງຫົວໜ້າກົມ ວ່າດ້ວຍ ມາດຕະຖານດ້ານສຸຂານາໄມໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ເລກທີ0386/ກປ, ລົງວັນທີ 14 ມີນາ 2012ຊຶ່ງເອກະສານດັ່ງກ່າວນັ້ນ ແມ່ນບ່ອນອີງໃຫ້ແກ່ການຄຸ້ມຄອງການຂ້າສັດ ແລະ ກວດກາອະນາໄມຊີ້ນຂອງ ສປປ ລາວໃນປະຈຸບັນນີ້.

ຜ່ານການຈັດຕັ້ງປະຕິບັດ ລະບຽບການທີ່ໄດ້ກ່າວມານັ້ນ ເຫັນວ່າ ພວກເຮົາໄດ້ມີເຄື່ອງມືໃນການຄຸ້ມຄອງຕິດຕາມ ແລະ ພັດທະນາການຂ້າສັດ ແລະ ກວດກາອະນາໄມຊີ້ນຂອງພວກເຮົາໃຫ້ມີຄວາມເຂັ້ມແຂງຂຶ້ນມາເປັນລຳດັບ ເວົ້າລວມ. ເວົ້າສະເພາະ ມາຮອດປະຈຸບັນນີ້ ພວກເຮົາ ໄດ້ມີໂຮງຂ້າສັດ ທີ່ໄດ້ມາດຕະຖານ ພຽງ 2 ແຫ່ງ ແລະມີການຄຸ້ມຄອງຕິດຕາມການຂ້າສັດ ທຸກອາທິດ ຢູ່ໃນໂຮງຂ້າສັດ 20 ກວ່າແຫ່ງ ແລະ ຢູ່ຈຸດຂ້າສັດ ກວ່າ 500 ແຫ່ງຢູ່ທົ່ວປະເທດ ແລະ ບາງເຂດແຂວງກໍເລີ່ມມີການກວດກາດັດສົມ ເພື່ອໃຫ້ຮັບປະກັນດ້ານຄວາມສະອາດ ແລະ ມີສຸຂານາໄມດີຂຶ້ນເປັນລຳດັບ. ທົ່ວສັງຄົມ ມີຄວາມຕື່ນຕົວທາງດ້ານຄຸນນະພາບຊີ້ນ ສານຕົກຄ້າງໃນຊີ້ນ ການປະສົມສານທີ່ເປັນອັນຕະລາຍໃນຊີ້ນສັດ ນັບມື້ນັບສູງຂຶ້ນເຊັ່ນດຽວກັນ.

ແຕ່ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບດ້ານຕັ້ງໜ້າດັ່ງກ່າວ, ໃນການພັດທະນາການຂ້າສັດ ແລະ ກວດກາອະນາໄມຊີ້ນຢູ່ ສປປ ລາວ ກໍຍັງມີບາງບັນຫາຫຼາຍຢ່າງ ເປັນຕົ້ນແມ່ນຂອດການຄຸ້ມຄອງ, ການພັດທະນາພື້ນຖານວັດຖຸເຕັກນິກ ໃຫ້ໄດ້ມາດຕະຖານການຂ້າສັດ ແລະ ຄວາມປອດໄພຂອງອາຫານຂອງສາກົນ ແມ່ນຍັງມີຂໍ້ຈຳກັດຫຼາຍ. ໂດຍພາບລວມການຂ້າສັດ ຂອງ ສປປ ລາວແມ່ນຍັງເປັນແບບປະຖົມປະຖານ, ບໍ່ທັນໄດ້ນຳໃຊ້ຫຼັກການປະຕິບັດງານທີ່ດີ ຕາມມາດຕະຖານຂອງອົງການຈັດຕັ້ງສາກົນວາງອອກ ຊຶ່ງຈະມີຜົນໂດຍກົງກັບການຕະຫລາດ ແລະ ລາຄາຊີ້ນຂອງ ສປ ລາວ ບໍ່ສາມາດແຂ່ງຂັນກັບຕ່າງປະເທດໄດ້ຖ້າບໍ່ມີການປັບປຸງແກ້ໄຂ.

ສາເຫດຕົ້ນຕໍ ກໍຍ້ອນ ສປປ ລາວ ຍັງບໍ່ທັນມີນະໂຍບາຍທີ່ຊັດເຈນ, ຂາດລະບົບການຄຸ້ມຄອງ ແລະກວດກາ ຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນສັດແຕ່ຫົວທີ ຖ້າທຽບກັບປະເທດເພື່ອນບ້ານ, ຄວາມຮູ້-ຄວາມເຂົ້າໃຈ ແລະ ການຕື່ນຕົວຂອງຜູ້ປະກອບການກ່ຽວກັບຄວາມປອດໄພຂອງອາຫານໃນຕ່ອງໂສ້ຂອງການຜະລິດສັດຍັງບໍ່ທັນສູງ, ມາດຕະການກວດກາຕິດຕາມ ຍັງບໍ່ເຂັ້ມງວດ ຈຶ່ງເຮັດໃຫ້ເກີດມີຊ່ອງຫວ່າງ ເກີດຄວາມມັກງ່າຍ ບໍ່ຢາກລົງທຶນ, ບໍ່ຢາກພັດທະນາ ແລະ ໃນທີ່ສຸດ ກໍຈະເຮັດໃຫ້ ສປປ ລາວ ຍັງຢູ່ໃນພາວະສ່ຽງຕະຫລອດມາ. ເວົ້າລວມໃນກົດໝາຍທີ່ມີປະຈຸບັນ ຍັງແມ່ນການກຳນົດລວມໆ ຍັງຂາດນິຕິກຳຈັດຕັ້ງປະຕິບັດ.

ດ້ວຍເຫດຜົນຄືດັ່ງກ່າວ ກະຊວງກະສິກຳ ແລະປ່າໄມ້ ຈຶ່ງໄດ້ສ້າງຮ່າງດຳລັດວ່າດ້ວຍການຂ້າສັດ ແລະກວດກາອະນາໄມຊີ້ນນີ້ຂຶ້ນ ເພື່ອໃຫ້ເປັນເຄື່ອງມື ຄຸ້ມຄອງການຂ້າສັດ ແລະ ກວດກາຜະລິດຕະພັນສັດ ໃຫ້ມີຄວາມປອດໄພຈົນຮອດມືຜູ້ບໍລິໂພກ ແນໃສ່ສົ່ງເສີມການຜະລິດສະບຽງອາຫານຂອງ ສປປ ລາວ ເວົ້າລວມ,ເວົ້າສະເພາະແມ່ນເພື່ອສະກັດກັ້ນຄວາມສ່ຽງ ແລະ ສິ່ງທີ່ເປັນອັນຕະລາຍທີ່ອາດເກີດຈາກການຂ້າສັດ ຊະຊາຍ ຢ່າງບໍ່ມີຄວາມ

ຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ເປັນການຊຸກຍູ້ໃຫ້ເກີດມີການຜະລິດ ແລະ ປຸງແຕ່ງຜະລິດຕະພັນສັດ ຂຶ້ນທັງທາງດ້ານປະລິມານ ແລະຄຸນນະພາບ ປະກອບສ່ວນເຂົ້າໃນການຊຸກຍູ້ ສົ່ງເສີມການລ້ຽງສັດ ຂອງປະເທດໃຫ້ມີຄວາມເຂັ້ມແຂງ.

## 2.2 ຈຸດປະສົງ

ຈຸດປະສົງຂອງການສ້າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນນີ້ ກໍເພື່ອຜັນຂະຫຍາຍ ໝວດທີ 4 ມາດຕາ 52, ມາດຕາ 53, ມາດຕາ 54, ມາດຕາ 55 ແລະ ມາດຕາ 75 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດສະບັບປັບປຸງ ໃຫ້ເປັນອັນລະອຽດ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຢ່າງມີຜົນສັກສິດ ພ້ອມທັງ ໃຫ້ສອດຄ່ອງກັບມາດຕະການ, ຄຳແນະນຳຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ແນໃສ່ເຮັດໃຫ້ຊີ້ນ, ຜະລິດຕະພັນສັດ ມີຄວາມສະອາດ, ປອດໄພ ແລະ ໃຫ້ສາມາດເຊື່ອມໂຍງກັບປະເທດຄູ່ຄ້າ.

## 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ

### 3.1 ທາງເລືອກທີ 1: ຮັກສາຕາມສະພາບການປັດຈຸບັນ

ອົງປະກອບທີ່ສຳຄັນ ແລະ ເງື່ອນໄຂທີ່ຕ້ອງປະຕິບັດຂອງນິຕິກຳທີ່ມີຢູ່:

1)ລະບົບການຄຸ້ມຄອງ ການຂ້າສັດ ແລະ ກວດກາອະນາໄມຊີ້ນ ທີ່ມີໃນປັດຈຸບັນ ຍັງບໍ່ສາມາດບັນລຸເງື່ອນໄຂທີ່ ທີ່ຈະຮັບປະກັນ ການຄຸ້ມຄອງການຂ້າສັດ ຢ່າງມີປະສິດທິພາບ;

2) ການຄຸ້ມຄອງການຂ້າສັດ ຍັງບໍ່ເຂັ້ມງວດ ເຮັດໃຫ້ເກີດມີຊ່ອງຫວ່າງ ແລະ ຄວາມສ່ຽງ ທີ່ຜູ້ບໍລິໂພກຍັງສືບຕໍ່ໄດ້ຮັບອາຫານທີ່ບໍ່ປອດໄພ ຊຶ່ງເກີດມີທາງສຽງ ຢູ່ເປັນປະຈຳວ່າ ຊີ້ນສັດຂອງ ສປປ ລາວ ຕໍ່າກວ່າມາດຕະຖານ ແລະ ມີການປົນເປື້ອນດ້ວຍພະຍາດ ແລະ ສານເຄມີທີ່ມີຜົນກະທົບຕໍ່ຜູ້ບໍລິໂພກ ນັບມື້ນັບສູງ;

3)ຂໍ້ກຳນົດ ກົດລະບຽບ ກ່ຽວກັບການຄຸ້ມຄອງການຂ້າສັດທີ່ກຳນົດໃນກົດໝາຍສະບັບປັບປຸງ ຍັງເປັນແບບລວມໆ ບໍ່ທັນເປັນເອກະພາບກັນໃນທາງປະຕິບັດ, ມາດຕະການກໍບໍ່ທັນລະອຽດ ລວມທັງບໍ່ທັນສອດຄ່ອງກັບຄຳແນະນຳຂອງສາກົນ.

4) ການຄຸ້ມຄອງ ການຂ້າສັດ ແລະ ກວດກາອະນາໄມຊີ້ນ ວຽກງານທີ່ກ່ຽວຂ້ອງກັບຫລາຍຂະແໜງການ ຊຶ່ງນິຕິກຳ ທີ່ມີໃນໄລຍະຜ່ານມາແລ້ວນັ້ນ ແມ່ນເປັນຂໍ້ຕົກລົງລະດັບກະຊວງກະສິກຳ ແລະ ປ່າໄມ້ ເທົ່ານັ້ນ ຊຶ່ງອາດຍັງບໍ່ທັນມີຜົນສັກສິດຢ່າງພຽງພໍ ທີ່ຈະຫຼາຍຂະແໜງການຈັດຕັ້ງປະຕິບັດໄດ້.

**ຜົນດີ:**

1) ບໍ່ສູນເສຍງົບປະມານໃນການສ້າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ;
2) ລະບົບການຄຸ້ມຄອງ ແລະ ໜ້າທີ່ຮັບຜິດຊອບຍັງຮັກສາໄວ້ຄືເກົ່າ.

**ຜົນເສຍ:**

1. ສປປ ລາວ ຈະສືບຕໍ່ມີຄວາມສ່ຽງ ໄດ້ບໍລິໂພກຊີ້ນ ທີ່ບໍ່ປອດໄພ ຍ້ອນ ນິຕິກຳຄຸ້ມຄອງຍັງບໍ່ຮັດກຸມ. ຍັງມີການຂ້າສັດຢ່າງຊະຊາຍ ບໍ່ທັນມີຄວາມເປັນເອກະພາບໃນທາງປະຕິບັດຢູ່ແຕ່ລະທ້ອງຖິ່ນ ແລະ ສະພາບການຂ້າສັດທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ກໍຄືງບໍ່ຖືກແກ້ໄຂໃຫ້ດີຂຶ້ນ;

2. ບັນດາຄຳສັບ, ນິຍາມທີ່ໄດ້ນຳມາໃຊ້ຜ່ານມາ ຍັງມີຄວາມໝາຍ ທີ່ສອດຄ່ອງກັບສາກົນ, ຄຳສັບເຕັກນິກບໍ່ທັນໄດ້ອະທິບາຍໃຫ້ແຈ້ງ ແລະຄົບຖ້ວນ ຊຶ່ງອາດມີຊ່ອງຫວ່າງເກີດຂຶ້ນ ໃນກໍລະນີເກີດມີຂໍ້ຂັດແຍ້ງລະຫວ່າງການຈັດຕັ້ງປະຕິບັດ;
3. ນິຕິກຳຕ່າງໆ ທີ່ທາງຂະແໜງການປະກາດໃຊ້ໃນໄລຍະຜ່ານມາ ຍັງບໍ່ໄດ້ກຳນົດຈະແຈ້ງການແບ່ງຂັ້ນຄຸ້ມຄອງ, ສິດ ແລະໜ້າທີ່ລະອຽດ ໂດຍສະເພາະ ແມ່ນສິດ ລະຫວ່າງ ສູນກາງ, ແຂວງ ແລະ ເມືອງ;
4. ການຄຸ້ມຄອງການຂ້າສັດ ແລະ ກວດກາອະນາໄມຊີ້ນ ຂອງຂະແໜງ ການກະສິກຳ ແລະປ່າໄມ້ ທີ່ໄດ້ປະກາດ ແລະ ນຳໃຊ້ມານັ້ນ ເຫັນວ່າ ບໍ່ສາມາດຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິພາບ ຍ້ອນວ່າ ການຄຸ້ມຄອງກ່ຽວຂ້ອງກັບຫຼາຍຂະແໜງການ ໂດຍສະເພາະຂະແໜງອຸດສາຫະກຳການຄ້າ ຈຶ່ງມີຄວາມຈຳເປັນຕ້ອງກຳນົດບົດບາດການຄຸ້ມຄອງໃຫ້ແຈ້ງກວ່າເດີມ.
5. ເກີດຄວາມບໍ່ສອດຄ່ອງລະຫວ່າງເນື້ອໃນຄຳສັ່ງ, ແຈ້ງການ ແລະບົດແນະນຳຕ່າງໆທີ່ກ່ຽວຂ້ອງທີ່ຂະແໜງການກະສິກຳ ແລະ ປ່າໄມ້ ທີ່ໄດ້ປະກາດນຳໃຊ້ ໃນໄລຍະກ່ອນ ກັບເນື້ອໃນຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ແລະ ຍັງບໍ່ສອດຄ່ອງກັບຫຼັກການທົ່ວໄປຂອງອົງການການຄ້າໂລກ ແລະຄຳແນະນຳ ໃນການສ້າງນິຕິກຳ ຂອງອົງການສຸຂະພາບສັດສາກົນ (OIE).

### 3.2 ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກຳ

ໃນໄລຍະຜ່ານມາລັດຖະບານ, ອົງການ ແລະຂະແໜງການທີ່ກ່ຽວຂ້ອງກໍຄືກະຊວງກະສິກຳແລະປ່າໄມ້ໄດ້ເອົາໃຈໃສ່ປະຕິບັດນິຕິກຳຢ່າງເຂັ້ມງວດ ແລະມີປະສິດທິພາບສູງ ໂດຍຖືເອົາວຽກງານດັ່ງກ່າວເປັນບັນຫາສຳຄັນຕົ້ນຕໍ ແລະຊອກທຸກວິທີທາງ ເພື່ອຫຼີກເວັ້ນການອອກນິຕິກຳໃໝ່ ແຕ່ກໍບໍ່ສາມາດຄຸ້ມຄອງ ແລະຕິດຕາມກວດກາໄດ້ເທົ່າທີ່ຄວນ.

**ຜົນດີ:**

- ບໍ່ສູນເສຍງົບປະມານໃນການສ້າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ;
- ລະບົບການຄຸ້ມຄອງແລະໜ້າທີ່ຮັບຜິດຊອບຍັງຮັກສາໄວ້ຄືເກົ່າ.

**ຜົນເສຍ:**

- ລັດຖະບານມີຄວາມຮັບຜິດຊອບຫຼາຍຂຶ້ນ;
- ນຳໃຊ້ງົບປະມານ ແລະບຸກຄະລາກອນຜູ້ທີ່ມີຄວາມຮູ້, ຄວາມສາມາດ ຈຳນວນຫຼາຍເຂົ້າໃນການເຄື່ອນໄຫວຕົວຈິງ ;
- ການຈັດຕັ້ງປະຕິບັດບໍ່ສາມາດເຮັດໃຫ້ວຽກງານດັ່ງກ່າວສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດສະບັບປັບປຸງປີ 2016 ແລະ ແຜນພັດທະນາເສດຖະກິດສັງຄົມ ໃນໄລຍະໃໝ່.

### 3.3 ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກຳ

ການສ້າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ ກໍເພື່ອເປັນບ່ອນອີງໃນການກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ, ຄວບຄຸມການຂ້າສັດຢ່າງມີຄວາມຮັບຜິດຊອບ ແລະ ຮັບປະກັນດ້ານຄຸນນະພາບ, ຄວາມປອດໄພ ຕໍ່ຜູ້ບໍລິໂພກ ແນໃສ່ປະກອບສ່ວນໃນການຮັກສາສຸຂະພາບມະນຸດ ລວມທັງເປັນການສົ່ງເສີມສຸຂະພາບຂອງປະຊາຊົນ, ພັດທະນາເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ.

**ຜົນດີ:**

1) ເປັນເຄື່ອງມືດ້ານນິຕິກຳໃນການຈັດຕັ້ງປະຕິບັດວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ, ສາມາດພັດທະນາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ມີຄຸນນະພາບ ແລະຮັບປະກັນຄວາມປອດໄພ ແກ່ຜູ້ບໍລິໂພກ ແລະສາມາດຄຸ້ມຄອງທຸລະກິດກ່ຽວກັບການຂ້າສັດ, ຂົນສົ່ງຜະລິດຕະພັນສັດ ແລະ ການວາງຂາຍ ເຂົ້າສູ່ລະບົບ-ລະບຽບ ທີ່ກຳນົດໄວ້;
2) ເຈົ້າໜ້າທີ່ສັດຕະວະແພດ ພະນັກງານກວດກາອະນາໄມຊີ້ນ ຈະມີສິດໃນການຈັດຕັ້ງປະຕິບັດມາດຕະການດ້ານສັດຕະວະແພດໄດ້ຢ່າງຄົບຊຸດ ໃນການຄວບຄຸມການຂ້າສັດຂອງ ສປປ ລາວ;
3) ກົນໄກປະສານງານ ກັບຂະແໜງການ ແລະພາກສ່ວນທີ່ກ່ຽວຂ້ອງກັບການຄຸ້ມຄອງການຂ້າສັດ ຈະມີຄວາມຊັດເຈນ ແລະ ຈະແຈ້ງຂຶ້ນ ເຮັດໃຫ້ການຈັດຕັ້ງປະຕິບັດ ມີຄວາມຄ່ອງຕົວ ແລະມີປະສິດທິຜົນກວ່າເກົ່າ;
4) ນິຕິກຳ ກ່ຽວກັບການຄຸ້ມຄອງການຂ້າສັດ ແລະ ກວດກາອະນາໄມຊີ້ນ ຂອງ ສປປ ລາວ ສອດຄ່ອງກັບມາດຕະຖານຂອງອົງການຈັດຕັ້ງສາກົນ ພ້ອມທັງຈະສາມາດເຊື່ອມໂຍງກັບພາກພື້ນ ແລະສາກົນ ຊຶ່ງເປັນການປະຕິບັດພັນທະຂອງ ສປປ ລາວ ໃນນາມເປັນສະມາຊິກອົງການການຄ້າໂລກ;
5) ສາມາດ ຕອບໂຈດ ຫຼື ຫຼຸດຜ່ອນຫາງສຽງ ແລະ ຄວາມເປັນຫ່ວງ ເປັນໄຍຂອງສັງຄົມ ກ່ຽວກັບການນຳໃຊ້ສານເຄມີຕ້ອງຫ້າມ ແລະ ອັນຕະລາຍ ເຂົ້າໃນການລ້ຽງສັດ ແລະ ປົນເປື້ອນໃສ່ຜະລິດຕະພັນສັດໄດ້ໃນລະດັບນຶ່ງ ຊຶ່ງການຈັດຕັ້ງປະຕິບັດດັ່ງກ່າວຈະເປັນການຮັບປະກັນຄວາມປອດໄພ ຂອງອາຫານທີ່ມີແຫຼ່ງກຳເນີດມາຈາກສັດຫຼາຍຂຶ້ນ;

**ຜົນເສຍ:**

1) ສູນເສຍງົບປະມານຂອງລັດຈຳນວນໜຶ່ງ ເຂົ້າໃນການສ້າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ, ມີຄວາມຈຳເປັນໃນການສ້າງ ແລະ ປັບປຸງ ເຄື່ອງມືດ້ານວິຊາການ ເພື່ອສະໜັບສະໜູນໃຫ້ແກ່ວຽກງານຄຸ້ມຄອງ, ກວດກາອະນາໄມຊີ້ນ ແລະ ການວິໄຈຄຸນນະພາບຂອງຜະລິດຕະພັນສັດ ແລະ ຕ້ອງໄດ້ປັບປຸງຍົກລະດັບຄວາມອາດສາມາດຂອງພະນັກງານວິຊາການສະເພາະດ້ານ ແລະ ພະນັກງານຄຸ້ມຄອງບໍລິຫານວຽກງານດັ່ງກ່າວຢ່າງເປັນລະບົບ;
2) ບັນດາຜູ້ປະກອບການ ທີ່ໄດ້ດຳເນີນທຸລະກິດຜ່ານມາ ຈະຕ້ອງໄດ້ໃຊ້ເວລາ ແລະ ງົບປະມານຈຳນວນໜຶ່ງເພື່ອພັດທະນາ ປັບປຸງສະຖານທີ່ຂ້າສັດຂອງຕົນເອງ ລວມທັງການຂຶ້ນທະບຽນດຳເນີນທຸລະກິດ ໃຫ້ສອດຄ່ອງຕາມລະບຽບການກຳນົດ;
3) ມີຄວາມຈຳເປັນໃນການສ້າງ ແລະ ປັບປຸງ ເຄື່ອງມືດ້ານວິຊາການ ເພື່ອສະໜັບສະໜູນໃຫ້ແກ່ວຽກງານຄຸ້ມຄອງ, ກວດກາອະນາໄມຊີ້ນ ແລະ ການວິໄຈຄຸນນະພາບຂອງຜະລິດຕະພັນສັດ ແລະ ຕ້ອງໄດ້ປັບປຸງຍົກລະດັບຄວາມອາດສາມາດຂອງພະນັກງານວິຊາການສະເພາະດ້ານ ແລະ ພະນັກງານຄຸ້ມຄອງບໍລິຫານວຽກງານດັ່ງກ່າວຢ່າງເປັນລະບົບ.

### 3.4 ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກຳ

#### 3.4.1 ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ

ຄະນະຮັບຜິດຊອບສ້າງຮ່າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນເຫັນດີເລືອກເອົາທາງເລືອກທີ່ 3 ເນື່ອງຈາກວ່າ:ດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ ຖືເປັນວິທີທີ່ດີທີ່ສຸດໃນການແກ້ໄຂບັນຫາທີ່ເກີດຂຶ້ນຖ້າທຽບໃສ່ສອງທາງເລືອກທີ່ກ່າວມານັ້ນຄື:

- ມີນິຕິກຳ ທີ່ມີຜົນບັງຄັບໃຊ້ໃນລະດັບທີ່ສູງກວ່າ ທີ່ຂະແໜງການເຄີຍປະກາດໃຊ້ໃນເມື່ອກ່ອນ ເພື່ອຄຸ້ມຄອງ ແລະ ກວດກາ ຄຸນນະພາບຂອງການຂ້າສັດ ແລະ ກວດກາອະນາໄມຊີ້ນ ທີ່ເປັນເອກະພາບກັນ;
- ມີການແບ່ງຄວາມຮັບຜິດຊອບຂອງແຕ່ລະຂັ້ນການຄຸ້ມຄອງ ລະຫວ່າງ ສູນກາງ (ກະຊວງ/ກົມ) ແລະ ທ້ອງຖິ່ນ (ແຂວງ/ເມືອງ) ມີຄວາມລະອຽດກວ່າເດີມ;
- ສາມາດ ຕອບໂຈດ ຫຼື ຫຼຸດຜ່ອນທາງສຽງ ແລະ ຄວາມເປັນຫ່ວງ ເປັນໄຍຂອງສັງຄົມ ກ່ຽວກັບຄຸນນະພາບຊີ້ນ ແລະ ຄວາມປອດໄພ ຂອງຊີ້ນສັດໄດ້ໃນລະດັບທີ່ດີກວ່າ.

ຜ່ານການທາບທາມຄຳເຫັນຈາກພາກລັດ, ພາກທຸລະກິດ ແລະສັງຄົມ: ໂດຍພື້ນຖານແມ່ນເຫັນດີ ແລະສະໜັບສະໜູນຕໍ່ການສ້າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ.

ນິຕິກຳທີ່ຈະສ້າງ ຫຼື ປັບປຸງ ນອນຢູ່ໃນປະເພດນິຕິກຳ ທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກຳບໍ່?

☑ ແມ່ນ ☐ ບໍ່ແມ່ນ

### 3.4.2 ການປັບປຸງຮ່າງນິຕິກຳ

ນິຕິກຳສະບັບນີ້ ເປັນນິຕິກຳ ທີ່ສ້າງຂຶ້ນມາໃໝ່.

### 3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ

ນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ຈະຈຳກັດການແຂ່ງຂັນທາງທຸລະກິດ ໃນ ສປປ ລາວ ຫຼື ບໍ່?

☐ ຈຳກັດ ☑ ບໍ່ຈຳກັດ

ຖ້າມີການຈຳກັດ, ກະລຸນາອະທິບາຍວ່າຈະມີການແຂ່ງຂັນທາງທຸລະກິດຄືແນວໃດ ແລະ ຍ້ອນຫຍັງ.

### 3.4.4 ພັນທະຕໍ່ສາກົນ

ຮ່າງນິຕິກຳ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼືບໍ່?

☑ ແມ່ນ ☐ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☑WTO ☑ AEC☑ FTA ☐ອື່ນໆ ☑ OIE (ອົງການສຸຂະພາບສັດສາກົນ)

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງມີຄວາມສອດຄ່ອງກັບພັນທະສາກົນນັ້ນຫຼືບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງແມ່ນ

### 3.4.5 ນິຕິກຳທີ່ພົວພັນ

ໃຫ້ກຳນົດບັນດານິຕິກຳທີ່ພົວພັນກັບຮ່າງນິຕິກຳທີ່ສະເໜີສ້າງຫຼືປັບປຸງ

- ກົດໝາຍ ວ່າດ້ວຍ ອຸດສາຫະກຳ ແລະ ປຸງແຕ່ງ, ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ
- ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ການຂ້າສັດ ແລະ ກວດກາອະນາໄມຜະລິດຕະພັນສັດ ເລກທີ0870/ກປ ລົງວັນທີ 18 ມີນາ 2011.

- ຂໍ້ຕົກລົງຂອງຫົວໜ້າກົມ ວ່າດ້ວຍ ມາດຕະຖານດ້ານສຸຂານາໄມໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ເລກທີ 0386/ກປ, ລົງວັນທີ 14 ມີນາ 2012
- ຄໍາແນະຂອງອົງການ ກົດລະຫັດອາຫານ (ກົດເດັກ ອາລີມັງຕາຣຸສ)
- ຄໍາແນະຂອງອົງການສຸຂະພາບສັດສາກົນ
- ສັນຍາວ່າດ້ວຍສຸຂານາໄມ ແລະ ສຸຂານາໄມພືດ, ອົງການການຄ້າໂລກ

  ຮ່າງນິຕິກໍາທີ່ສະເໜີສ້າງຫຼືປັບປຸງນັ້ນມີຄວາມສອດຄ່ອງກັບນິຕິກໍາທີ່ກ່ຽວຂ້ອງຫຼືບໍ່?

  ☑ສອດຄ່ອງ ☐ບໍ່ສອດຄ່ອງ

  ຖ້າບໍ່ສອດຄ່ອງ, ກະລຸນາອະທິບາຍແຈ້ງ

## 4. ຄາດຄະເນຜົນກະທົບ ແລະ ການທາບທາມຄໍາເຫັນ

### 4.1 ສັງຄົມ

#### 4.1.1 ຜົນກະທົບ

<u>**ຜົນກະທົບທາງບວກ:**</u>

- ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;
- ສາມາດ ຄວບຄຸມ ແລະ ຫຼຸດຜ່ອນ ຄວາມບໍ່ປອດໄພຂອງຊີ້ນ ແລະ ຜະລິດຕະພັນສັດ ໄດ້ໃນລະດັບນຶ່ງ ຊຶ່ງການຈັດຕັ້ງປະຕິບັດດັ່ງກ່າວຈະເປັນການຮັບປະກັນຄວາມປອດໄພຂອງອາຫານທີ່ມີແຫຼ່ງກໍາເນີດມາ ຈາກສັດ;
- ສ້າງຄວາມເຊື່ອໝັ້ນໃຫ້ແກ່ບັນດາປະເທດ ກໍຄືພາກພື້ນ ແລະ ສາກົນ ກ່ຽວກັບຊີ້ນ ແລະ ຜະລິດຕະພັນ ຊີ້ນທີ່ຕົ້ນກໍາເນີດຈາກສັດ.

<u>**ຜົນກະທົບທາງລົບ:**</u>

- ປະຊາຊົນ, ຜູ້ດໍາເນີນທຸລະກິດ ການຂ້າສັດ ຕ້ອງໄດ້ມີສະຕິຕໍ່ດໍາລັດວ່າດ້ວຍການຂ້າສັດ ແລະ ກວດກາ ອະນາໄມຊີ້ນຫຼາຍຂຶ້ນ.

#### 4.1.2 ເງື່ອນໄຂໃນການປະຕິບັດນິຕິກໍາ

ໃນການຈັດຕັ້ງປະຕິບັດດໍາລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ ເພື່ອຄຸ້ມຄອງການຂ້າສັດ ແລະ ການກວດກາອະນາໄມຊີ້ນ ຮັບປະກັນດ້ານຄຸນນະພາບ, ຄວາມປອດໄພຂອງຊີ້ນ ແລະ ຜະລິດຕະພັນຊີ້ນ ແນໃສ່ປະກອບສ່ວນໃນການຮັກສາສຸຂະພາບຂອງຜູ້ບໍລິໂພກ ລວມທັງເປັນການສົ່ງເສີມສຸຂະພາບຂອງປະຊາຊົນ, ພັດທະນາເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ.

ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດນິຕິກໍາ:

ຄ່າໃຊ້ຈ່າຍເບື້ອງຕົ້ນ (ຖ້າມີ): ບໍ່ມີ

ຄ່າໃຊ້ຈ່າຍໃນແຕ່ລະປີ: ບໍ່ມີ

#### 4.1.3 ການທາບທາມຄໍາເຫັນ

ການສ້າງຮ່າງດໍາລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ ຄັ້ງນີ້, ຄະນະຮັບຜິດຊອບໄດ້ທາບທາມຄໍາເຫັນຢ່າງກວ້າງຈາກບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງຢູ່ຂັ້ນສູນກາງ ແລະທ້ອງຖິ່ນ, ທັງພາກລັດ ແລະພາກເອກະຊົນ ໃນຂອບເຂດທົ່ວປະເທດດ້ວຍຫຼາຍວິທີການ ເປັນຕົ້ນ: ການທາບທາມຄໍາເຫັນຜ່ານເວບ

ໃຊ້, ສື່ມວນຊົນ, ການຈັດກອງປະຊຸມ ແລະສິ່ງຮ່າງດຳລັດດັ່ງກ່າວ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະກອບຄຳເຫັນ.

4.1.4 **ສະຫຼຸບ**

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ) | ☐ | ☑ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ) | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລັ່ຍ)<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ | ☐ | ☑ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍຕໍ່ວິທີການດາລົງຊີວິດຂອງບຸກຄົນ) | ☐ | ☑ | ☐ |
| ບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບ ລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍຫຼື ບໍ່ມີເລີຍ) | ☐ | ☑ | ☐ |

**4.2 ພາກທຸລະກິດ**

**4.2.1 ຜົນກະທົບ**

ການສ້າງດຳລັດ ວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ ຈະສົ່ງຜົນກະທົບຕໍ່ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງກັບການຂ້າສັດ.

<u>ຜົນກະທົບທາງບວກ:</u>

- ເປັນເຄື່ອງມືໃນການຄຸ້ມຄອງຂະແໜງການລ້ຽງສັດ ແລະສັດຕະວະແພດ ໂດຍສະເພາະພາກທຸລະກິດທີ່ກ່ຽວຂ້ອງກັບການຂ້າສັດ, ນຳເຂົ້າ ແລະຈຳໜ່າຍສັດ ແລະ ຜະລິດຕະພັນສັດ ໃນສປປ ລາວ ຕ້ອງໄດ້ຂຶ້ນທະບຽນດຳເນີນທຸລະກິດເພື່ອສະດວກໃນການຄຸ້ມຄອງ ຊຶ່ງຜູ້ດຳເນີນທຸລະກິດເອງກໍຈະມີຄວາມໝັ້ນໃຈ ແລະ ຄວາມຍຸຕິທຳຫຼາຍຂຶ້ນ ເພາະທຸລະກິດມີຄວາມຖືກຕ້ອງ ສອດຄ່ອງຕາມກົດໝາຍ ແລະລະບຽບການ
- ອີງການຄຸ້ມຄອງທຸລະກິດກ່ຽວກັບການຂ້າສັດ ຈະມີສະຖິຕິ ການຂ້າສັດ ແລະ ຈຳໜ່າຍ ໃນ ສປປ ລາວ ທັງນີ້ ຈະສະດວກໃນການຄຸ້ມຄອງ ວາງແຜນໃນຕໍ່ໜ້າ;
- ຫົວໜ່ວຍທຸລະກິດ ຈະເຂົ້າໃຈເຖິງຂັ້ນຕອນ ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ມີຄວາມວ່ອງໄວ, ໂປ່ງໃສ ແລະ ຈະແຈ້ງຂຶ້ນຕື່ມ ໂດຍມີການກຳນົດເວລາ ໃນການພິຈາລະນາ ຢ່າງຊັດເຈນ.

<u>ຜົນກະທົບທາງລົບ:</u>

- ຫົວໜ່ວຍທຸລະກິດ ອາດຈະມີຄວາມຫຍຸ້ງຍາກໃນເບື້ອງຕົ້ນກ່ຽວກັບການລົງທຶນພັດທະນາພື້ນຖານໂຄງລ່າງ;
- ຫົວໜ່ວຍທຸລະກິດ ຈະໃຊ້ເວລາ ທີ່ຈະສະໜອງຂໍ້ມູນ ທີ່ເປັນບ່ອນອີງໃຫ້ແກ່ພາກລັດເພື່ອຄວບຄຸມຕິດຕາມຄຸນນະພາບຂອງການຂ້າສັດ;

#### 4.2.2 ເງື່ອນໄຂໃນການປະຕິບັດນິຕິກຳ

- ຫົວໜ່ວຍທຸລະກິດ ຕ້ອງຜ່ານຂັ້ນຕອນການຂໍອະນຸຍາດ ໃຫ້ຖືກຕ້ອງ ຕາມດຳລັດ;
- ຫົວໜ່ວຍທຸລະກິດ ຕ້ອງມີການລົງທຶນ ໃສ່ໃນການປັບປຸງພື້ນຖານໂຄງລ່າງຂອງທຸລະກິດຕົນເອງ ໃຫ້ໄດ້ມາດຕະຖານ;
- ຫົວໜວຍທຸລະກິດ ຕ້ອງໄດ້ມີການໂຄສະນາ ເຜີຍແຜ່ ລະບຽບການທີ່ກ່ຽວຂ້ອງ ໃຫ້ກັບພະນັກງານວິຊາການ ແລະ ກຳມະກອນ ພາຍໃນທຸລະກິດຂອງຕົນ.

ຄາດຄະເນຄ່າສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດນິຕິກຳ:

ຄ່າໃຊ້ຈ່າຍເບື້ອງຕົ້ນ (ຖ້າມີ): ບໍ່ມີ, ຖ້າບໍ່ໄດ້ດຳເນີນທຸລະກິດ ກ່ຽວກັບການຂ້າສັດ, ການນຳເຂົ້າ ແລະ ການຈຳໜ່າຍສັດ ແລະ ຜະລິດຕະພັນສັດ ແລະ ບໍ່ໄດ້ລະເມີດດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ.

ຄ່າໃຊ້ຈ່າຍໃນແຕ່ລະປີ:ບໍ່ມີ, ຖ້າບໍ່ໄດ້ດຳເນີນທຸລະກິດ ກ່ຽວກັບການຂ້າສັດ, ການນຳເຂົ້າ ແລະ ການຈຳໜ່າຍສັດ ແລະ ຜະລິດຕະພັນສັດ ແລະ ບໍ່ໄດ້ລະເມີດດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ.

#### 4.2.3 ການທາບທາມຄຳເຫັນ

ຮ່າງດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ ສະບັບນີ້, ໄດ້ຮັບການທາບທາມ ຈາກຜູ້ດຳເນີນທຸລະກິດການຂ້າສັດ, ນຳເຂົ້າ ແລະ ຈຳໜ່າຍ ສັດ ແລະ ຜະລິດຕະພັນສັດ, ໂຮງງານຂ້າສັດນ້ຳຊວງ, ໂຮງງານຂ້າສັດດອນດູ່ ແລະ ບັນດາບ່ອນຂ້າສັດຍ່ອຍ ຢູ່ໃນບັນດາເມືອງຂອງນະຄອນຫຼວງວຽງຈັນ.

#### 4.2.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂະແໜງອຸດສາຫະກຳທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຂະແໜງອຸດສາຫະກຳສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ) | ☐ | ☑ | ☐ |
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວທີ່ຖືກຜົນກະທົບ) | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລັ່ຍ) (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບຕໍ່ບຸກຄົນ | ☐ | ☑ | ☐ |
| ລະດັບການປ່ຽນແປງຕໍ່ວິທີການເຮັດທຸລະກິດທີ່ມີຢູ່ໃນປັດຈຸບັນ (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ) | ☐ | ☑ | ☐ |
| ການບໍ່ເຫັນດີຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບ ລະຫວ່າງທຸລະກິດທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☐ | ☑ | ☐ |

### 4.3 ລັດຖະບານ

#### 4.3.1 ຜົນກະທົບ

**<u>ຜົນກະທົບທາງບວກ:</u>**

- ສາມາດຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ເຂົ້າສູ່ລະບຽບການທີ່ກຳນົດໄວ້ ແລະ ແທດເໝາະກັບສະພາບຕົວຈິງຂອງສປປລາວພ້ອມທັງມີມາດຕະການຄົບຖ້ວນໃນການສະກັດກັ້ນການຈຳໜ່າຍຊີ້ນສັດ ຈາກການຂ້າສັດນອກໂຮງຂ້າ ພ້ອມທັງເປັນການ ຮັບປະກັນດ້ານສຸຂະພາບໃຫ້ແກ່ສັງຄົມ;
- ມີກົນໄກການປະສານງານກັບຂະແໜງການ ແລະພາກສ່ວນທີ່ກ່ຽວຂ້ອງມີຄວາມຊັດເຈນ ແລະຈະແຈ້ງຂຶ້ນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຂ້າສັດ ແລະ ກວດກາອະນາໄມຊີ້ນມີຄວາມຄ່ອງຕົວ ແລະມີປະສິດທິຜົນດີຂຶ້ນກວ່າເກົ່າ.
- ຍົກລະດັບ ບັນດາໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ລວມທັງ ບັນດາຫ້ອງວິໄຈຜະລິດຕະພັນສັດ ໃຫ້ໄດ້ມາດຕະຖານ ເພື່ອສາມາດກວດກາ ແລະຄຸ້ມຄອງຄຸນນະພາບຜະລິດຕະພັນສັດຢ່າງເປັນລະບົບຄົບຊຸດ;
- ປົກປ້ອງຜົນປະໂຫຍດ ໃຫ້ແກ່ຜູ້ປະກອບການ ແລະ ຜູ້ບໍລິໂພກ;
- ເປັນພື້ນຖານໃຫ້ແກ່ການພັດທະນາ ຜະລິດຕະພັນ ໃຫ້ກາຍເປັນຍີ່ຫໍ້ ມີເຄື່ອງໝາຍການຄ້າ ເພື່ອອຳນວຍຄວາມສະດວກໃນການສົ່ງອອກໄປຕ່າງປະເທດ;
- ມີຂໍ້ມູນ ທີ່ເປັນບ່ອນອີງໃຫ້ແກ່ການຄຸ້ມຄອງ ແລະ ວາງແຜນການໃນລະດັບທີ່ດີຂຶ້ນ;

**<u>ຜົນກະທົບທາງລົບ :</u>**

- ລະດັບຄວາມຮູ້ຄວາມສາມາດທາງດ້ານເຕັກນິກ ຂອງພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ຍັງຈຳກັດຊຶ່ງກະຊວງກະສິກຳ ແລະປ່າໄມ້ຕ້ອງສ້າງບຸກຄະລະກອນສະເພາະດ້ານ ກ່ຽວກັບການກວດກາອະນາໄມຊີ້ນທັງທາງດ້ານປະລິມານ ແລະຄຸນນະພາບໃຫ້ພຽງພໍ ກັບຄວາມຕ້ອງການ;
- ລັດຖະບານຕ້ອງໄດ້ ລົງທຶນໃສ່ ວຽກງານຄຸ້ມຄອງການຂ້າສັດ ຫຼາຍຂຶ້ນກວ່າເກົ່າ ເນື່ອງຈາກຕ້ອງໄດ້ມີການລົງທຶນເຂົ້າໃນການສ້າງແຜນການ ແລະ ສ້າງໂຄງການພັດທະນາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ, ການຝຶກອົບຮົມ, ການສ້າງບຸກຄະລາກອນ ແລະ ພື້ນຖານວັດຖຸເຕັກນິກ ໂດຍສະເພາະ ການຍົກລະດັບຫ້ອງວິໄຈຜະລິດຕະພັນສັດໃຫ້ໄດ້ມາດຕະຖານສາກົນເພື່ອຮອງຮັບການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ຢ່າງມີປະສິດທິພາບ.

### 4.3.2 ເງື່ອນໄຂໃນການຈັດຕັງປະຕິບັດນິຕິກຳ

- ຕ້ອງໄດ້ລົງທຶນໃສ່ການຍົກລະດັບພື້ນຖານ ວັດຖຸເຕັກນິກ ທີ່ເໝາະສົມ ເປັນຕົ້ນ ຫ້ອງວິໄຈຜະລິດຕະພັນສັດ ແລະ ກໍ່ສ້າງ ແລະ ບຳລຸງ ຊັບພະຍາກອນມະນຸດສະເພາະດ້ານ ເພື່ອຮອງຮັບໃຫ້ແກ່ການກວດກາອະນາໄມຊີ້ນ;
- ຕ້ອງໄດ້ມີການໂຄສະນາ ເຜີຍແຜ່ ໃຫ້ແກ່ພະນັກງານວິຊາການ ແລະ ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງຊາບ;

ຄ່າໃຊ້ຈ່າຍເບື້ອງຕົ້ນ (ຖ້າມີ):

- ງົບປະມານ ສຳລັບ ປັບປຸງ ຫ້ອງວິໄຈຜະລິດຕະພັນສັດ;
- ງົບປະມານ ສຳລັບ ຝຶກອົບຮົມນັກວິຊາການກວດກາອະນາໄມຊີ້ນ;
- ງົບປະມານ ສຳລັບ ໂຄສະນາ ເຜີຍແຜ່.

ຄ່າໃຊ້ຈ່າຍຕໍ່ປີ (ຕົວເລກຄາດຄະເນ):
- ງົບປະມານ ສໍາລັບ ປັບປຸງ ຫ້ອງວິໄຈຜະລິດຕະພັນສັດ ຄາດຈໍານວນ 3 ຕື້ກີບ
- ງົບປະມານ ສໍາລັບ ຝຶກອົບຮົມນັກວິຊາການ ຈໍານວນ 2 ຕື້ ກີບ
- ງົບປະມານ ສໍາລັບ ໂຄສະນາ ເຜີຍແຜ່ ຈໍານວນ ຫ້າຮ້ອຍລ້ານ ກີບ

#### 4.3.3 ການທາບທາມຄໍາເຫັນ

ບັນດາກະຊວງ ແລະ ອົງການຈັດຕັ້ງລັດ ທີ່ມີສ່ວນກ່ຽວຂ້ອງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ຖືກທາບທາມຄໍາເຫັນໃນຂອບເຂດທົ່ວປະເທດ ຊຶ່ງມີຜູ້ຕາງໜ້າຈາກຂະແໜງສາທາລະນະສຸກ, ຂະແໜງອຸດສາຫະກໍາ ແລະ ການຄ້າ, ກົມນິຕິກໍາ ສໍານັກງານນາຍົກ, ບັນດາກົມ, ສະຖາບັນ ແລະ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ອ້ອມຂ້າງກະຊວງກະສິກໍາ ແລະ ປ່າໄມ້ ເຂົ້າຮ່ວມທັງໝົດ 162 ເທື່ອ ຄົນ

#### 4.3.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈໍານວນຂັ້ນການປົກຄອງທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ)<br>(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ນິຕິກາມີຜົນກະທົບໃນທຸກຂັ້ນຂອງການປົກຄອງ) | ☐ | ☑ | ☐ |
| ຈໍານວນອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງອງການຈັດຕັ້ງໃນແຕ່ລະຂັ້ນໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການຢູ່ຂັ້ນແຂວງ) | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດທີ່ໄດ້ຮັບຜົນກະທົບ ໃນການຄຸ້ມຄອງບໍລິຫານລັດ (ສະເລັ່ຍ)<br>(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບຕໍ່ອົງການຈັດຕັ້ງລັດ | ☐ | ☑ | ☐ |
| ລະດັບການປ່ຽນແປງຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານທີ່ມີຢູ່ໃນປັດຈຸບັນ<br>(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ) | ☐ | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບຂອງອົງການຈັດງຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກໍາທີ່ສະເໜີສ້າງ ຫຼື ປັບປຸງ<br>(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບ ລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☐ | ☑ | ☐ |

## 5. ການຈັດຕັ້ງປະຕິບັດ

### 5.1 ການສະໜັບສະໜູນ ແກ່ບຸກຄົນ

ລັດຖະບານຕ້ອງໄດ້ສຸມໃສ່ຈັດຕັ້ງປະຕິບັດການບໍລິຫານຄຸ້ມຄອງ, ການຝຶກອົບຮົມ, ການສ້າງບຸກຄະລາກອນ ແລະ ພື້ນຖານວັດຖຸເຕັກນິກ ໂດຍສະເພາະການຍົກລະດັບຫ້ອງວິໄຈ ແລະ ດ່ານກວດກາສັດຕະວະແພດ ໃຫ້ໄດ້ມາດຕະຖານສາກົນເພື່ອຮອງຮັບການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ຢ່າງມີປະສິດທິພາບ.

**5.2 ການສະໜັບສະໜູນແກ່ພາກທຸລະກິດ**

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດດຳລັດວ່າດ້ວຍປາສັດຕະອະແພດ, ລັດຖະບານຕ້ອງໄດ້ສະໜອງຂໍ້ມູນຂ່າວສານດ້ານນິຕິກຳ ໃຫ້ແກ່ພາກທຸລະກິດ.

**5.3 ແຜນການຈັດຕັ້ງປະຕິບັດ**

- ຈັດກອງປະຊຸມເຜີຍແຜ່ໃນຂອບເຂດທົ່ວປະເທດ ແລະດ້ວຍຫຼາຍຮູບການໄປພ້ອມກັນ ເປັນຕົ້ນ: ໜັງສືພິມ, ວິທະຍຸ, ເວບໃຊ້ ແລະອື່ນໆ;
- ສ້າງຄຳແນະນຳ ແລະເອກະສານຄູ່ມືຕ່າງໆເພື່ອຊ່ວຍຈັດຕັ້ງປະຕິບັດດຳລັດດັ່ງກ່າວໃຫ້ພາກລັດ ແລະທຸລະກິດ;
- ນຳເຂົ້າໃນຫຼັກສູດການຮຽນການສອນຂອງມະຫາວິທະຍາໄລ, ວິທະຍາໄລ ແລະ ໂຮງຮຽນວິຊາຊີບ ເພື່ອໃຫ້ນັກສຶກສາໄດ້ສຶກສາ ແລະຮຽນຮູ້.

**5.4 ງົບປະມານ ແລະ ແຫຼ່ງທຶນ**

ໃນການຈັດຕັ້ງປະຕິບັດດຳລັດວ່າດ້ວຍຂ້າສັດ ແລະ ກວດກາອະນາໄມຊີ້ນ ແມ່ນນຳໃຊ້ງົບປະມານຂອງລັດ ແລະ ໂຄງການຜະລິດສັດ ແລະ ປາເປັນສິນຄ້າ ຮ່ວມມື ລາວ - ຮົງກາລີ ໃນການໂຄສະນາເຜີຍແຜ່, ຝຶກອົບຮົມ, ປັບປຸງຫ້ອງວິໃຈ ແລະດ່ານກວດກາສັດຕະອະແພດ.

**5.5 ທົບທວນຄືນ**

ພາຍຫຼັງທີ່ດຳລັດວ່າດ້ວຍປາສັດຕະອະແພດມີຜົນສັກສິດ ແລ້ວ, ຕ້ອງໄດ້ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດ. ຫຼັງຈາກນັ້ນ, ຕ້ອງໄດ້ທົບທວນຄືນນິຕິກຳ ໂດຍການສຳຫຼວດ ແລະປະເມີນຜົນການຈັດຕັ້ງປະຕິບັດ.

## ການອະນຸມັດ

1. ☐ ເຊັນປິດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ.
2. ☑ເຊັນປິດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ມີຄຳເຫັນຕໍ່ປິດປະເມີນ.

ນະຄອນຫຼວງວຽງຈັນ, ວັນທີ.................................……

**ຫົວໜ້າຄະນະຮັບຜິດຊອບສ້າງ**

**ດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ**